ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222, 451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222, 451116 FAX: 451117

E-mail:Lcc@laocement.com,www.laocement.com

ເລກທີ 002/ບຊລ

ນະຄອນຫລວງວຽງຈັນ, ວັນທີ 05 JAN 2021

ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ປີ 2020
ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ)

ປະຊຸມເມື່ອວັນທີ 28/12/2020 ເວລາ 14:00 ໂມງ ທີ່ຫ້ອງປະຊຸມຊັ້ນ 08 ອາຄານຕະຫຼາດຫຼັກຊັບລາວ ບ້ານ ໂພນທັນເໜືອ, ເມືອງ ໄຊເສດຖາ, ນະຄອນຫລວງວຽງຈັນ, ເປັນປະທານກອງປະຊຸມໂດຍທ່ານ ຈ່າງລີ້ ຜູ້ອຳນວຍການ ບຊລ ຊຶ່ງມີຜູ້ເຂົ້າຮ່ວມກອງປະຊຸມທັງໝົດ 16 ທ່ານ, ໃນນີ້ມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມ 11 ທ່ານ ແລະມອບສັນທະ 05 ທ່ານ, ມີຮຸ້ນລວມກັນທັງໝົດ 35,570,000 ຮຸ້ນ ເທົ່າກັບ 89 ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະກົດລະບຽບຂອງບໍລິສັດ.

I. ປະທານກອງປະຊຸມໄດ້ກ່າວຕ້ອນຮັບແຂກ ແລະແນະນຳຜູ້ທີ່ເຂົ້າຮ່ວມປະຊຸມ ດັ່ງນີ້ :

- **ຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຢູ່ເມືອງຄຸນມິງ ສປຈີນ (ແບບອອນລາຍ):**

1. ທ່ານ ຢາງຊຸນຢິງ ຕຳແໜ່ງ : ປະທານສະພາບໍລິຫານຂອງບໍລິສັດ ຊີມັງລາວ ມະຫາຊົນ, ຜູ້ອຳນວຍການໃຫ່ຍຂອງບໍລິສັດການຮ່ວມມືເຕົ້ານົກເສດຖະກິດສາກົນ ຢຸນນານ ສປຈີນ ຈຳກັດ (CYC)
2. ທ່ານ ຫຼີ ຊຸນໂປ ຕຳແໜ່ງ : ກຳມະການສະພາບໍລິຫານ ອິດສະຫຼະຂອງບໍລິສັດ ຊີມັງລາວ ມະຫາຊົນ

- **ຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຢູ່ນະຄອນຫຼວງວຽງຈັນ ປະກອບມີ :**

1. ທ່ານ ວັນທອງ ສິດທິກຸນ ຕຳແໜ່ງ : ຮອງປະທານສະພາບໍລິຫານຂອງ ບໍລິສັດ LCC, ຜູ້ອຳນວຍການໃຫ່ຍ ລັດວິສາຫະກິດ ພກອ (DAI).
2. ທ່ານ ອູຢາງຈີຢິງ ຕຳແໜ່ງ : ຮອງປະທານສະພາບໍລິຫານຂອງບໍລິສັດ ຊີມັງລາວ ມະຫາຊົນ, ຮອງຜູ້ອຳນວຍການໃຫ່ຍຂອງບໍລິສັດການຮ່ວມມືເຕົ້ານົກເສດຖະກິດສາກົນ ຢຸນນານ ສປຈີນ ຈຳກັດ (CYC)
3. ທ່ານ ຈ່າງລີ້ ຕຳແໜ່ງ : ກຳມະການສະພາບໍລິຫານ, ຜູ້ອຳນວຍການ ບໍລິສັດ LCC.
4. ທ່ານ ວິຈິດ ສຸວັນນະລາດ ຕຳແໜ່ງ : ກຳມະການສະພາບໍລິຫານ, ຮອງຜູ້ອຳນວຍການ ບໍລິສັດ LCC.
5. ທ່ານ ເຈ້ຍ ຢ້າວຊີ ຕຳແໜ່ງ : ກຳມະການສະພາບໍລິຫານ, ຮອງຜູ້ອຳນວຍການ ບໍລິສັດ LCC.
6. ທ່ານ ວົງວິຈິດ ແກ້ວວົງກົດ ຕຳແໜ່ງ : ກຳມະການສະພາບໍລິຫານ ອິດສະຫຼະ ຂອງບໍລິສັດ LCC

7. ທ່ານ ຫຼີຫຼິງ ຕຳແໜ່ງ : ຜູ້ອຳນວຍການໃຫ່ຍ ບໍລິສັດ ຫຼັກຊັບລາວ-ຈີນ ຈຳກັດ
8. ທ່ານ ນ ວັນນະພອນ ສຸນັນທາ ຕຳແໜ່ງ : ວິຊາການພະແນກຄຸ້ມຄອງການອອກຈຳໜ່າຍຫຼັກຊັບ,ສຄຄຊ ເປັນຫົວໜ້າຄະນະ
9. ທ່ານ ເອກະໄຊ ມະນີວົງ ຕຳແໜ່ງ : ຫົວໜ້າຂະແໜງ, ພະແນກຈົດທະບຽນ ແລະເປີດເປີດຂໍ້ມູນ,ຕລຫຊ ເປັນຄະນະ
10. ທ່ານ ສິນທະນູ ສົມພອງບຸດຕະຂັນ ຕຳແໜ່ງ : ຕາງໜ້າຜູ້ຖືຮຸ້ນລາຍຍ່ອຍ

II. ສະເໜີກ່ຽວກັບລະບຽບ, ວິທີການລົງຄະແນນສຽງ ໃຫ້ທີ່ປະຊຸມຊາບ ຊຶ່ງມີລະອຽດດັ່ງລຸ່ມນີ້ :

1. ການລົງຄະແນນສຽງ :

1) ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈຳນວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
2) ໃນການລົງຄະແນນສຽງ,ຂໍໃຫ້ທ່ານປະກອບຂໍ້ມູນໃສ່ບັດລົງຄະແນນສຽງທີ່ໄດ້ແຈກຢາຍໃຫ້,ໃນນັ້ນ ຕ້ອງ ລະບຸຢ່າງຈະແຈ້ງກ່ຽວກັບ ຊື່ ແລະ ນາມສະກຸນຂອງທ່ານ,ຈຳນວນຮຸ້ນຂອງບໍລິສັດ ຊີມັງລາວ ມະຫາຊົນ ທີ່ທ່ານຖືຢູ່ ແລະ ໃຫ້ໝາຍຕີນກາໃສ່ຫ້ອງບໍ່ເຫັນດີ.
3) ກໍລະນີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ກາເຄື່ອງໝາຍໃສ່ຊ່ອງບໍ່ເຫັນດີໃນບັດລົງຄະແນນ ແລ້ວຍົກບັດນັ້ນຂຶ້ນ ເພື່ອໃຫ້ພະນັກງານນຳໄປກວດນັບຄະແນນສຽງໃນອາລະນັ້ນໆ ແລະສຳລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກຂຶ້ນ ຈະຖືວ່າ ເຫັນດີຕາມທີ່ສະເໜີໃນກອງປະຊຸມ, ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ ຢ່າງຈະແຈ້ງແລ້ວ, ຊຶ່ງບໍລິສັດ ໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.
4) ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນນັ້ນ ແມ່ນໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນທີ່ໄດ້ລະບຸໄວ້ໃນໃບມອບສັນທະນັ້ນ,

2. ການນັບ ແລະການແຈ້ງຜົນການລົງຄະແນນສຽງ

1) ທ່ານ ຈະໄດ້ຮັບແຈ້ງ ກ່ຽວກັບຜົນການ ນັບຄະແນນຢູ່ໃນທີ່ປະຊຸມເລີຍ,ໂດຍການນັບຄະແນນສຽງ ຈະຖື ເອົາໜຶ່ງຮຸ້ນເທົ່າກັບໜຶ່ງຄະແນນສຽງ.
2) ການລົງຄະແນນສຽງບໍ່ເຫັນດີຈະມີຜົນສັກສິດກໍ່ຕໍ່ເມື່ອມີຄະແນນສຽງຫລາຍກວ່າເຄິ່ງໜຶ່ງຂອງຈຳນວນຮຸ້ນ ຂອງບໍລິສັດ ຊີມັງລາວ ມະຫາຊົນທັງໝົດໃນທີ່ປະຊຸມ ດັ່ງທີ່ໄດ້ກຳນົດໃນມາດຕາ 143 ຂອງກົດໝາຍວ່າ ດ້ວຍລັດວິສະຫະກິດ.
3) ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ຈະນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າທີ່ມາເຂົ້າຮ່ວມກອງປະຊຸມ ແລະລົງ ຄະແນນສຽງໃນແຕ່ລະວາລະ.
4) ທ່ານ ສິນທະນູ ສົມພອງບຸດຕະຂັນ ຜູ້ຄວບຄຸມຄະແນນກອງປະຊຸມຈະປະກາດຜົນການລົງຄະແນນສຽງ ໃນແຕ່ລະວາລະໃຫ້ກອງປະຊຸມຮັບຊາບ ຫລັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນລົງ ໂດຍຈະ ແຍກຄະແນນເຫັນດີ ແລະບໍ່ເຫັນດີເປັນຈຳນວນສຽງ ແລະເປັນຈຳນວນຈັກສ່ວນຮ້ອຍ,
5) ສຳລັບຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ຫຼັງຈາກທີ່ຜູ້ຄວບຄຸມຄະແນນໄດ້ປະກາດຜົນການລົງຄະແນນ ສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວ ມານັບເປັນຄະແນນສຽງ ຕື່ມອີກ.

ໂດຍອີງຕາມລະບຽບ ແລະກົດໝາຍທີ່ກ່ຽວຂ້ອງ ໃນກອງປະຊຸມຄັ້ງນີ້ແມ່ນບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນກອງປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະປະກອບຄຳເຫັນກ່ຽວກັບວາລະກອງປະຊຸມ,

III. ສະເໜີວາລະຂອງການປະຊຸມ

ວາລະທີ 1 : ພິຈາລະນາ ແລະຮັບຮອງແຜນການປະກອບຮຸ້ນ ແລະຟື້ນຟູທຸລະກິດຂອງບໍລິສັດ

ເວລາຕໍ່ມາ,ທ່ານ ຈ່ຳງລີ ປະທານກອງປະຊຸມໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ປີ 2020 ໂດຍມອບໃຫ້ຜູ້ທີ່ກ່ຽວຂ້ອງລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດ ດັ່ງລຸ່ມນີ້ :

ວາລະທີ 1 : ພິຈາລະນາ ແລະຮັບຮອງ ແຜນການປະກອບຮຸ້ນ ແລະຟື້ນຟູທຸລະກິດຂອງບໍລິສັດ LCC

ຜູ້ອຳນວຍການບໍລິສັດ (ທ່ານ ຈ່ຳງລີ) ໄດ້ລາຍງານແຜນການປະກອບຮຸ້ນ ແລະຟື້ນຟູທຸລະກິດຂອງ ບໍລິສັດ LCC ເພື່ອໃຫ້ຜູ້ຖືຮຸ້ນຮັບຊາບດັ່ງມີລາຍລະອຽດໃນ **<u>ເອກະສານຄັດຕິດ 02:</u>** ທີ່ໄດ້ຄັດຕິດກັບໜັງສືແຈ້ງເຊີນ, ເປີດເຜີຍໃນເວັບໄຊຂອງຕະຫຼາດຫຼັກຊັບ ແລະກອງປະຊຸມສະພາບໍລິຫານ ບຊລ ກໍໄດ້ຮັບຮອງຄວາມຖືກຕ້ອງແລ້ວ, ຈຶ່ງເຫັນດີສະເໜີໃຫ້ກອງປະຊຸມຜູ້ຖືຮຸ້ນພິຈາລະນາ ແລະ ຮັບຮອງ. ດັ່ງນັ້ນ,ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດເຫັນ.

- **ທ່ານ ຫຼືຫຼິງ ໃນນາມຜູ້ຖືຮຸ້ນສະເໜີຕໍ່ກອງປະຊຸມວ່າ :**

1. ແຜນການສະບັບນີ້ໄດ້ສຳເລັດໃນເດືອນ 11/2020 ແຕ່ປັດຈຸບັນນີ້ຮອດເດືອນ 12/2020 ສະພາບການມີການປ່ຽນແປງເນື້ອໃນຂອງແຜນການສະບັບນີ້ມີການອັບເດດຕາມສະພາບຕົວຈິງຫຼືບໍ່? ຖ້າຈ່ຳງລີ ຕອບວ່າ : ແຜນການສະບັບນີ້ໄດ້ພິຈາລະນາ ແລະຮັບຮອງຈາກກອງປະຊຸມສະພາບໍລິຫານຄັ້ງອັນທີ 30/11/2020 ແລ້ວ ແມ່ນໄດ້ມີການອັບເດດຕາມສະພາບຕົວຈິງແລ້ວ.
2. ມີຝ່າຍເຈດຈຳນົງໄດ້ສົ່ງເອກະສານກ່ຽວກັບເຈດຈຳນົງການຊື້ຮຸ້ນໃຫ້ຜູ້ຖືຮຸ້ນອັບດັບ 1,2,3 ຂອງຜູ້ຖືຮຸ້ນ ບໍລິສັດ ຊີມັງລາວ ມະຫາຊົນ ແລ້ວ ບໍລິສັດຢຸນນານສາກົນ ກັບ ລັດວິສາຫະກິດ ພກອ ສາມາດຮັບໄດ້ຕາມເງື່ອນໄຂຂອງບໍລິສັດທີ່ຈະມີການຈັດຊື້ຮຸ້ນຫຼືບໍ່? ແລະໄດ້ລາຍງານໃຫ້ຂັ້ນເທິງຂອງແຕ່ລະຝ່າຍຕາມເວລາທີ່ວາງແຜນໄວ້ຫຼືບໍ່? ທ່ານ ຈ່ຳງລີຕອບວ່າ : ໜັງສືເຈດຈຳນົງການຈັດຊື້ຮຸ້ນໄດ້ລາຍງານໃຫ້ບໍລິສັດຢຸນນານ ສາກົນ ແລະລັດວິສາຫະກິດ ພກອ ຮັບຊາບແລ້ວ, ຄວາມຄິດເຫັນຂອງບໍລິສັດຢຸນນານສາກົນແມ່ນການກຳນົດລາຄາຊື້-ຂາຍຮຸ້ນແມ່ນຕ້ອງສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງ ແລະສອດຄ່ອງກັບຂໍ້ກຳນົດກ່ຽວກັບການຄຸ້ມຄອງລັດວິສາຫະກິດ ແລະການຄຸ້ມຄອງຊັບສິນຂອງລັດວິສາຫະກິດ, ປະຈຸບັນນີ້ໄດ້ແຕ່ງຕັ້ງຄະນະຮັບຜິດຊອບມາຮອດ ສປປລາວ ແລ້ວ ເພື່ອປຶກສາຫາລືກັບຜູ້ຖືຮຸ້ນ ແລະຝ່າຍເຈດຈຳນົງຊື້ຮຸ້ນ ແລະ ທ່ານ ວັນທອງ ສິດທິກຸນ ຜູ້ອຳນວຍການໃຫ່ຍ ລັດວິສາຫະກິດ ພກອ ທັງເປັນຮອງປະທານສະພາບໍລິຫານຂອງ ບໍລິສັດ ຊີມັງລາວ ມະຫາຊົນ ໄດ້ຕອບວ່າ : ກ່ຽວກັບມີຝ່າຍເຈດຈຳນົງສະເໜີຢາກຊື້ຮຸ້ນຂອງ ບໍລິສັດ ຊີມັງລາວ ມະຫາຊົນ ຜູ້ຖືຮຸ້ນກໍ່ໄດ້ປຶກສາຫາລືກັນ 1-2 ຄັ້ງແລ້ວ ແລະໄດ້ຮັບໜັງສືເຈດຈຳນົງການຊື້ຮຸ້ນແລ້ວ ແລະໄດ້ລາຍງານໃຫ້ກະຊວງປ້ອງກັນປະເທດຮັບຊາບແລ້ວ ແຕ່ກະຊວງປ້ອງກັນປະເທດຕອບວ່າຈະບໍ່ຂາຍຮຸ້ນຂອງລັດວິສາຫະກິດ ພກອ ທີ່ຖືຄອງຢູ່. ປະຈຸບັນນີ້ກະຊວງປ້ອງກັນປະເທດກຳລັງປຶກສາຫາລືກັບພະແນກທີ່ກ່ຽວຂ້ອງຂອງລັດຖະບານ ເພື່ອແຕ່ງຕັ້ງຄະນະສະເພາະກິດຄົ້ນຄ້ວາ,ພິຈາລະນາ ແລະຈັດຕັ້ງປະຕິບັດ ແຜນການປະກອບຮຸ້ນ ແລະຟື້ນຟູທຸລະກິດຂອງບໍລິສັດ ຊີມັງລາວ ມະຫາຊົນ ແຕ່ເນື່ອງຈາກວ່າຮອດທ້າຍປີພະແນກທີ່ກ່ຽວຂ້ອງ ຂອງລັດຖະບານມີວຽກຫຼາຍຄາດຄະເນວ່າກອງປະຊຸມດັ່ງກ່າວຕ້ອງເລື່ອນເວລາອອກໄປຮອດເດືອນ 1/2021 ຈຶ່ງສາມາດເປີດໄດ້.

3. ຢູ່ໃນແຜນການປະກອບຮຸ້ນ ແລະຟື້ນຟູທຸລະກິດຂອງບໍລິສັດ ຊີມັງລາວ ມະຫາຊົນ ໄດ້ສະເໜີແຜນການສໍາຮອງໄວ້ເຊັ່ນ : ຊອກຫາຄູ່ຮ່ວມມືມາຟື້ນຟູທຸລະກິດໂດຍຜ່ານຮູບແບບການເຊົ່າ ຫຼືຮັບເໝົາ, ອີງຕາມສະພາບການແຂ່ງຂັນໃນທ້ອງຕະຫຼາດໃນປະຈຸບັນນີ້ເຮັດຈັ່ງໃດຈຶ່ງຈະສາມາດມີກໍາໄລໄດ້,ຖ້າຫາກເຊົ່າ ແລະຮັບເໝົາ,ຈະປ່ຽນຂະແໜງຫຼັກຄືຜະລິດແລະຈໍາໜ່າຍຊີມັງເປັນຂະແໜງການເຊົ່າເຄື່ອງຈັກການຜະລິດຊີມັງຫຼືບໍ່? ທ່ານ ຈ່າງລີ ຕອບວ່າ ຖ້າຫາກຟື້ນຟູທຸລະກິດໂດຍຜ່ານຮູບແບບການເຊົ່າ ແລະຮັບເໝົາບໍລິສັດ ຕ້ອງມີການປັບປຸງທາງດ້ານອົງກອນຈັດຕັ້ງຕ່າງໆ ແລະຕ້ອງພິຈາລະນາຫຼຸດຜ່ອນຕົ້ນທຶນແຮງງານ, ຂຸດຄົ້ນຖ່ານຫີນ ແລະນໍາໃຊ້ຫຼາຍວິທີເພື່ອຫຼຸດຜ່ອນຕົ້ນທຶນ ແລະເພີ່ມປະສິດທິພາບ ແລະຈະບໍ່ປ່ຽນຂະແໜງຫຼັກຂອງບໍລິສັດ ແລະ ທ່ານ ວັນທອງ ສິດທິກຸນ ຕອບວ່າ : ແຜນການສໍາຮອງມີແຕ່ເປັນທາງເລືອກໜຶ່ງເພື່ອໃຫ້ກອງປະຊຸມພິຈາລະນາ ຖ້າຫາກຟື້ນຟູທຸລະກິດດ້ວຍວິທີການໃຫ້ເຊົ່າ ຫຼືຮັບເໝົາແມ່ນມີຄວາມຫຍຸ້ງຍາກຫຼາຍເປັນຕົ້ນແມ່ນ : ເຄື່ອງກົນຈັກເກົ່າແກ່ຫຼ້າຫຼັງ, ພະນັກງານໄດ້ລາອອກແລ້ວ, ໄລຍະສໍາປະທານຍັງປະມານ 9 ປີ ກໍ່ສາມາດສໍາປະທານໄດ້.
4. ແຜນການດັ່ງກ່າວໄດ້ພິຈາລະນາ ແລະປຶກສາກັບບໍລິສັດກວດພາຍນອກຫຼືບໍ່? ແລະບໍລິສັດກວດສອບເຫັນດີເອົາແຜນການສະບັບນີ້ເປັນຫຼັກຖານ ເພື່ອອອກບົດລາຍງານການເງິນທີ່ຄົບເງື່ອນໄຂຫຼືບໍ່? ທ່ານ ຈ່າງລີ ຕອບວ່າ : ໃນຕົ້ນເດືອນ 12/2020 ໄດ້ປະຊຸມກັບບໍລິສັດກວດສອບໂດຍຜ່ານອອນລາຍເພາະວ່າຜູ້ຮັບຜິດຊອບບໍລິສັດກວດສອບແມ່ນຢູ່ປະເທດຫວຽດນາມ ຜ່ານການປຶກສາຫາລືບໍລິສັດກວດສອບໃນເບື້ອງຕົ້ນແມ່ນເຫັນດີຕາມເນື້ອໃນສະບັບນີ້, ຮອດເດືອນ 1/2021 ຜູ້ຮັບຜິດຊອບຂອງບໍລິສັດກວດສອບກັບມາ ສປປລາວ ແລ້ວຈະໄປປຶກສາຫາລືກັນອີກເທື່ອໜຶ່ງ ເພື່ອຮັບປະກັນແຜນການສະບັບນີ້ໃຫ້ສອດຄ່ອງກັບເງື່ອນໄຂທີ່ອອກບົດລາຍງານການເງິນທີ່ມີຄໍາຄິດເຫັນ.

ເຫັນຜົນສະຫຼຸບການລົງຄະແນນສຽງວາລະນີ້ ເຫັນດີໃນຈໍານວນ 35,570,000 ສຽງ ເທົ່າກັບ 100 ສ່ວນຮ້ອຍ, ບໍ່ເຫັນດີຈໍານວນ 0 ສຽງ ເທົ່າກັບ 0 ສ່ວນຮ້ອຍຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.

ຜ່ານການລາຍງານໃນກອງປະຊຸມວິສາມັນຜູ້ຖືຮຸ້ນມີທັງໝົດ 1 ວາລະ ແມ່ນຜ່ານໄປດ້ວຍຜົນສໍາເລັດອັນຈົບງາມ.

ຈາກນັ້ນ, ປະທານກອງປະຊຸມໄດ້ກ່າວຂອບໃຈບັນດາທ່ານຄະນະປະທານ, ຜູ້ຖືຮຸ້ນ, ກໍາມະການສະພາບໍລິຫານ ແລະແຂກທີ່ມີກຽດທຸກທ່ານ ພ້ອມກ່າວປິດກອງປະຊຸມໃນເວລາ 16:00 ໂມງ ຂອງວັນດຽວກັນ.

ປະທານກອງປະຊຸມ

ບໍລິສັດ ຊີມັງລາວ ມະຫາຊົນ Lao Cement Public Company

ຈ່າງ ລີ

ຜູ້ບັນທຶກ

ຈ້າວ ປິ່ງປິ່ນ

ໝາຍເຫດ : ບົດບັນທຶກສະບັບນີ້ໃຫ້ຖືເອົາສະບັບພາສາລາວເປັນຫຼັກ